# ໄພພິບັດ



ບົດຮຽນທີ 4 ສໍາລັບສະບາໂຕ
ທີ 26, 2025

“ແລະ ເພິ່ນບໍ່ຍອມປ່ອຍໃຫ້ປະຊາຊົນອິດ
ສະຣາເອນໄປ ຕາມທີ່ພຣະເຈົ້າໄດ້ກ່າວໄວ້
ຜ່ານທາງໂມເຊທຸກປະການ”

ອພຍ 9:35





ເມື່ອປະຊາຊົນຂອງພຣະເຈົ້າຜະເຊີນກັບສົງຄາມ, ພຣະເຈົ້າຊົງບັນຊາພວກເຂົາໃຫ້ເຈລະຈາໃນເງື່ອນໄຂແບບສັນຕິກ່ອນ. ຖ້າວ່າບໍ່ເປັນໄປຕາມການເຈລະຈາ, ຂັ້ນຕອນຕໍ່ໄປແມ່ນການປະຕິບັດ
(ອພຍ. 20:10-12).

ສິ່ງນີ້ແມ່ນສິ່ງທີ່ພຣະເຈົ້າໄດ້ຈັດການກັບຊາວເອຢິບ. ພະຍາຍາມແຈລະຈາດ້ວຍທາງອອກແບບສັນຕິສຸກ, ແຕ່ ທັດໂມດ ປະຕິເສດທີ່ຈະຍອມຮັບເອົາ. ສະນັ້ນຈຶ່ງເຖິງເວລາສາລັບການລົງມືກະທຳການແລ້ວ.

ເມື່ອໄພພິບັດເກີດຂຶ້ນ, ບໍ່ມີພຣະເຈົ້າອົງໃດໃນວິຫານອັນກ້ວາງໃຫຍ່ຂອງເອຢິບ ທີ່ຈະປົກປ້ອງພວກເຂົາຈາກອຳນາດຂອງພຣະເຈົ້າທີ່ແທ້ຈິງອົງນີ້ໄດ້.










- ໄພພິບັດ:
  - ການຕໍ່ສູ້ຂອງງູ (ອພຍ 7:8-12)
  - ຈິດໃຈທີ່ແຂ້ງກະດ້າງ (ອພຍ 7:13)
- ໄພພິບັດ:
  - ໄພພິບັດ 3 ປະການທຳອິດ (ອພຍ 7:14-8:19)
  - ໄພພິບັດແບບຈິງຈັງ 3 ປະການ (ອພຍ 8:20-9:12)
  - ໄພພິບັດ 3 ປະການທີ່ຮຸນແຮງ (ອພຍ 9:13-10:29)


ໄພພິບັດ

# ການຕໍ່ສູ້ຂອງງູ

"ພວກເຂົາໄດ້ຖິ້ມໄມ້ຄ້ອນເທົ້າຂອງພວກເຂົາລົງ ແລະ ໄມ້ຄ້ອນເທົ້ານັ້ນກໍໄດ້ກາຍເປັນງູ. ແຕ່ງູຂອງອາໂຣນໄດ້ກືນກິນງູຂອງພວກເຂົາ." (ອພຍ 7:12 NIV)



ພຣະເຈົ້າໄດ້ສະແດງໃຫ້ເຫັນວ່າ ພຣະອົງເທົ່ານັ້ນເປັນຜູ້ຊົງອຳນາດອັນສູງສຸດ ບໍ່ແມ່ນເທບພະເຈົ້າອົງໃດ ໃນເອຢິບ.

(ອພຍ. 12:12; ຈຊບຊ. 33:4).

ເຫິງມົງກຸດຂອງຟາໂຣ, ສັນຍາລັກແຫ່ງພະລັງອຳນາດ, ແມ່ນຮູບງູທີ່ປະດັບຢູ່ເຊິ່ງເປັນຕົວແທນຂອງເທບພະເຈົ້າຊື່ ອູດຽດ "Uadyet".





ແຕ່ເມື່ອພຣະເຈົ້າຊົງປ່ຽນໄມ້ເທົ້າກາຍເປັນງູ, ພຣະອົງຊົງກຳລັງທ້າຍທາຍເທບພະເຈົ້າອົງນີ້ຂອງກະສັດໂດຍກົງ (ອພຍ. 7:10). ເທບພະເຈົ້າອົງນີ້ຈະສາມາດປົກປ້ອງຟາໂຣໄດ້ບໍ?

ຊາຕານພະຍາຍາມຮຽນແບບການອັດສະຈັນນີ້ຜ່ານໝໍມົນ (ອພຍ. 7:11). ແຕ່ງູນັ້ນບໍ່ມີຊີວິດໄດ້ ເພາະຖືກງູຂອງພຣະເຈົ້ານັ້ນກືນກິນ (ອພຍ. 7:12).

ພຣະອົງຊົງສຳແດງໂຕຂອງພຣະອົງໃຫ້ເຫັນວ່າ, ພຣະອົງເທົ່ານັ້ນທີ່ຊົງຣິດທານຸພາບສູງສຸດ ທີ່ຢູ່ເໜືອເທບທຸກອົງຂອງຊາວເອຢິບ

# ຈິດໃຈທີ່ແຂ້ງກະດ້າງ

“ເຖິງປານນັ້ນກໍ່ຕາມ ກະສັດຟາໂຣຍັງໃຈແຂງກະດ້າງດື້ດຶງຢູ່ ແລະ ບໍ່ເຊື່ອຟັງໂມເຊ ແລະ ອາໂຣນ ຕາມທີ່ພຣະເຈົ້າຢາເວໄດ້ບອກໄວ້” (ອພຍ 7:13)



ໃນພຣະທຳອົບພະຍົບ, ໄດ້ກ່າວເຖິງ 9 ຄັ້ງທີ່ພຣະເຈົ້າຊົງເຮັດໃຫ້ໃຈຂອງຟາໂຣແຂງກະດ້າງ (ອພຍ. 4:21; 7:3; 9:12; 10:1; 10:20; 10:27; 11:10; 14:4; 14:8), ແລະ ອີກ 9 ຄັ້ງ ແມ່ນຈິດໃຈຂອງຟາໂຣນັ້ນແຂງກະດ້າງເອງ
(ອພຍ. 7:13; 7:14; 7:22; 8:15; 8:19; 8:32; 9:7; 9:34; 9:35). ແລ້ວ! ໃຜກັນທີ່ເຮັດໃຫ້ໃຈຂອງຟາໂຣແຂງກະດ້າງ?

ຫລັງຈາກໄພພິບັດ 5 ອັນທຳອິດ, ພຣະຄຳພີກ່າວວ່າຟາໂຣເປັນຜູ້ໃຈແຂງກະດ້າງເອງ. ເຊິ່ງໝາຍຄວາມວ່າ ລາວປະຕິເສດສຽງຮຽກເອີ້ນຂອງພຣະວິນຍານບໍຣິສຸດ ທີ່ຊົງບອກໃຫ້ປ່ອຍປະຊາຊົນໄປ



ຫລັງຈາກໄພພິບັດອັນທີ 6 , ພຣະອົງຊົງເຮັດໃຫ້ໃຈລາວແຂງກະດ້າງ(ອພຍ. 9:12). ເພາະຟາໂຣໄດ້ຜ່ານພົ້ນຈຸດປ່ຽນແຫ່ງການກັບໃຈໄປແລ້ວ. ຢ່າງໃດກໍ່ຕາມ, ໃນໄພພິບັດອັນທີ 7, ລາວໄດ້ຮັບໂອກາດອີກຄັ້ງແຕ່ລາວໄດ້ມີໃຈແຂງກະດ້າງອີກຄັ້ງ (ອພຍ. 9:34-35 ).

ນັບແຕ່ນັ້ນເປັນຕົ້ນມາ, ເພາະຟາໂຣເອງຊົງຕັດສິນໃຈຢ່າງແນ່ວແນ່ແລ້ວວ່າຈະບໍ່ກັບໃຈ ພຣະອົງຈຶ່ງເຮັດໃຫ້ຈິດໃຈຂອງລາວແຂງກະດ້າງຕໍ່ໄປ..



EGW ( The Review and Herald , February 17, 1891)

“ທຸກຄັ້ງທີ່ປະຕິເສດແສງສະຫວ່າງຂອງພຣະເຈົ້າ, ພຣະອົງກໍ່ຊົງສຳແດງຣິດທານຸພາບຂອງພຣະອົງຢ່າງຊັດເຈນຫລາຍຂຶ້ນ; ແຕ່ຄວາມດື້ດ້ານຂອງຟາໂຣກັບທະວີຂຶ້ນເລື້ອຍໆ, ຈົນກະທັ້ງລູກສອນແຫ່ງຄວາມເມດຕາສຸດທ້າຍ ຈາກທະນູອັນສັກສິດຂອງພຣະອົງນັ້ນໝົດລົງ. ທັນໃດນັ້ນຈິດໃຈຂອງຟາໂຣກໍ່ຍັງແຂງກະດ້າງຢູ່ໂດຍການຕໍ່ຕ້ານພຣະອົງຢ່າງບໍ່ລົດລະ. ຟາໂຣຫວ່ານຄວາມດື້ດ້ານ, ແລະ ກໍ່ໄດ້ເກັບກ່ຽວຜົນຈາກການດື້ດ້ານນັ້ນ. ພຣະອົງບໍ່ເຮັດຫຍັງເພີ່ມຫຼາຍເພື່ອໂນ້ມນ້າວຟາໂຣ, ເພາະພຣະອົງຊົງຖືກປິດກັ້ນດ້ວຍຄວາມດື້ຣັ້ນ, ເຊິ່ງພຣະວິນຍານບໍຣິສຸດບໍ່ສາມາດເຂົ້າເຖິງຫົວໃຈຂອງລາວໄດ້. ຟາໂຣໄດ້ປ່ອຍປະລະເລີຍຕໍ່ຄວາມບໍ່ເຊື່ອດ້ວຍຕົວຂອງລາວເອງ.”



# ໄພພິບັດ



# ໄພພິບັດອັນທຳອິດ(ທຳມະດາ): ເລືອດ

"ບັດນີ້ ພຣະເຈົ້າຢາເວກ່າວວ່າ, ດ້ວຍເຫດນີ້ ທ່ານຈະຮູ້ຈັກວ່າເຮົາແມ່ນພຣະເຈົ້າຢາເວ. ເບິ່ງເຖີດ ຂ້ານ້ອຍຈະເອົາໄມ້ຄ້ອນເທົ້າຕີນ້ຳ ແລະ ນ້ຳກໍ່ຈະກາຍເປັນເລືອດ." (ອພຍ 7:17)



ຮາປີ, ເທບພະເຈົ້າແຫ່ງແມ່ນ້ຳນິນ

ອພຍ 7:14-25

ແມ່ນ້ຳນິນນຳຊີວິດມາສູ່ຊາວເອຢິບ,. ແຕ່ໃຜເປັນຜູ້ຊົງສ້າງແມ່ນ້ຳນີ້r? ໝໍມິນໄດ້ຮຽນແບບການປ່ຽນແປງຂອງນ້ຳໄດ້, ແຕ່ພວກເຂົາບໍ່ສາມາດເຮັດໃຫ້ມັນກັບໄປສູ່ສະພາບເດີມໄດ້.



# ໄພພິບັດອັນທີ 2(ທຳມະດາ): ກົບ

"ແລ້ວພຣະເຈົ້າຢາເວກໍບອກໂມເຊວ່າ: ຈົ່ງບອກອາໂຣນໃຫ້ເດ່ໄມ້ຄ້ອນເທົ້າໃສ່ແມ່ນ້ຳລຳຄອງ ແລະ ໜອງບຶງທັງຫລາຍ ເພື່ອເຮັດໃຫ້ຝູງກົບຂຶ້ນມາເຕັມທົ່ວໄປໃນດິນແດນເອຢິບ" (ອພຍ 8:5)



ເຮເກັດ: ພຣະເຈົ້າແຫ່ງກົບ



ອພຍ 8:1-15

ພວກໝໍມົນກໍ່ສາມາດເຮັດການອັດສະຈັນແບບນີ້ໄດ້ ແຕ່ບໍ່ສາມາດຢຸດກົບເຫລົ່ານັ້ນໄດ້

# ໄພພິບັດອັນທີ 3(ທຳມະດາ): ຮີ້ນ

"ພຣະເຈົ້າສັ່ງໂມເຊວ່າ, ຈົ່ງບອກອາໂຣນເອົາໄມ້ຄ້ອນເທົ້າຕີດິນ ແລະ ຂີ້ຝຸ່ນກໍຈະກາຍເປັນຮີ້ນຢູ່ທົ່ວໄປໃນປະເທດເອຢິບ'" (ອພຍ 8:16)



ເກບ, ເທບພະເຈົ້າແຫ່ງແຜ່ນດິນ

ອພຍ 8:16-19

ພຣະອົງຊົງສ້າງຊີວິດຈາກການປັ້ນດິນ ແລະ ເປົ່າລົມຫາຍໃຈໃສ່ (ອພຍ. 1:24)? ພວກເຂົາບໍ່ຕ້ອງສົງໄສອີກຕໍ່ໄປກ່ຽວກັບຕົ້ນກຳເນີດຂອງໄພພິບັດ: "ແມ່ນພຣະເຈົ້າທີ່ເຮັດສິ່ງນີ້" (ອພຍ . 8:19). ແລະ ພວກໝໍມົນກໍ່ໄດ້ຍອມຮັບ



# ໄພພິບັດທີ 4(ຮຸນແຮງຂຶ້ນ): ຝູງເຫລືອກ

"ແລ້ວພຣະເຈົ້າຢາເວກໍໃຊ້ຝູງເຫລືອກອັນມະຫາສານ ເຂົ້າໄປໃນວັງຂອງກະສັດຟາໂຣ ພ້ອມທັງທີ່ພັກຂອງພວກຂ້າຣາຊການ. ທົ່ວປະເທດເອຢິບໄດ້ຮັບຜົນເສຍຫາຍນ້ອນຝູງເຫລືອກນີ້" (ອພຍ 8:24)





ອຸດຊິດ,
ເທບພຣະເຈົ້າ
ແຫ່ງແມງໄມ້

ອພຍ 8:20-32.

ເປັນຄັ້ງທຳອິດທີ່ຊາວອິດສະຣາເອນໄດ້ຮັບການປົກປ້ອງຈາກໂຣກລະບາດ. ສິ່ງນີ້ເຮັດໃຫ້ຟາໂຣຕ້ອງໄດ້ເຈລະຈາຕໍ່ລອງ ແຕ່ສຸດທ້າຍລາວກໍບໍ່ເຮັດຕາມຂໍ້ຕົກລົງໄດ້.

# ໄພພິບັດທີ 5 (ຮຸນແຮງຂຶ້ນ): ຝູງສັດຕາຍ

"ມືຂອງພຣະເຈົ້າຢາເວຈະລົງໂທດເຈົ້າໂດຍຈະໃຫ້ເກີດໂຣກລະບາດຢ່າງຮ້າຍແຮງ ແກ່ຝູງສັດທັງຫລາຍຄື: ມ້າ, ລໍ
, ອູດ, ແກະ ແລະ ແບ້" (ອພຍ 9:3)





ຄະນຳ, ເທບ
ພະເຈົ້າແຫ່ງ
ການສ້າງ

ອພຍ 9:1-7.

ເທບພະເຈົ້າຫລາຍອົງມີຫົວເປັນສັດ, ດັ່ງນັ້ນໄພພິບັດຄັ້ງນີ້
ຈຶ່ງເປັນການເຮັດໃຫ້ເທບພະເຈົ້າເຫລົ່ານັ້ນຕ້ອງຜ່າຍແພ້

# ໄພພິບັດທີ 6 (ຮຸນແຮງຂຶ້ນ): ຝີ

"ສະນັ້ນໂມເຊກັບອາໂຣນ ຈຶ່ງກຳເອົາຂີ້ເຖົ່າໄຟ ໄປຢືນຢູ່ຕໍ່ໜ້າກະສັດຟາໂຣ, ໂມເຊຫວ່ານຂີ້ເຖົ່າໄຟນັ້ນຂຶ້ນສູ່ອາກາດ ແລະ ມັນກໍ່ປິວໄປຕົກໃສ່ຄົນ ແລະ ສັດອັນເປັນເຫດໃຫ້ເກີດຕຸ່ມຝີ ແລະ ແຕກເປັນບາດແຜຕາມຕົນຕົວ" (ອພຍ 9:10)





ເຊກເມດເທບ ພະເຈົ້າແຫ່ງການຮັກສາ

ອພຍ 9: 8-12 .

ແມ້ແຕ່ບັນດາໝໍມົນຍັງບໍ່ສາມາດຮັກສາຕົວຂອງພວກເຂົາເອງໄດ້ (ອພຍ. 9:11). ຟາໂຣບໍ່ໄດ້ສົງໄສເຖິງແຫລ່ງທີ່ມາຂອງຣິດອຳນາດນີ້. ແຕ່ລາວເລືອກທີ່ຈະບໍ່ກົ້ມກາບພຣະເຈົ້າ, ແລະ ພຣະເຈົ້າໄດ້ໃຫ້ລາວເກັບກ່ຽວໃນສິ່ງທີ່ລາວເຮັດ (ອພຍ. 9:12).

# ໄພພິບັດທີ 7(ຮຸນແຮງຫລາຍ): ໝາກເຫັບ

"ສະນັ້ນມື້ອື່ນໃນເວລາດຽວກັນນີ້ ເຮົາຈະໃຫ້ໝາກເຫັບລູກໃຫຍ່ຕົກລົງຢ່າງໜັກ ຢ່າງບໍ່ເຄີຍມີມາຈັກເທື່ອໃນປະຫວັດສາດຂອງປະເທດເອຢິບ"
(ອພຍ 9:18)



ນັດ, ເທບພະເຈົ້າ
ແຫ່ງທ້ອງຟ້າ



ເຊດ, ເທບພະເຈົ້າ
ແຫ່ງພະຍຸ

ອພຍ 9:13-35.

ຄວາມເຊື່ອຂອງຊາວເອຢິບໄດ້ຖືກທົດລອງ. ຜູ້ທີ່ເຊື່ອລອດຊີວິດຈາກໄພພິບັດນີ້ ລວມທັງສັດ ແລະ ຄົນຮັບໃຊ້ (ອພຍ. 9:20). ຟາໂຣບໍ່ໄດ້ເຊື່ອ ເຖິງວ່າຈະສາລະພາບບາບ ແຕ່ກໍ່ບໍ່ແມ່ນໂດຍຈິງໃຈ (ອພຍ. 9:27-30).



# ໄພພິບັດທີ 8 (ຮຸນແຮງຫລາຍ): ຝູງຕັກແຕນ

"ຖ້າເຈົ້າຍັງສືບຕໍ່ປະຕິເສດຢູ່ ໃນມື້ອື່ນນີ້ ເຮົາຈະໃຫ້ຝູງຕັກແຕນເຂົ້າມາໃນປະເທດເອຢິບຂອງເຈົ້າ" (ອພຍ 10:4)



ເນເປີ, ເທບ
ພະເຈົ້າແຫ່ງ
ຜົນລະພືດ

ອພຍ 10:1-20.

ເມື່ອເອຢິບໄດ້ຮັບຄວາມເສຍຫາຍ ແລະ ເດືອດຮ້ອນຫລາຍ ຊາວເອຢິບໄດ້ຂໍຮ້ອງ ຟາໂຣ ໃຫ້ປ່ອຍຊົນຊາດອິດສະຣາເອນ ໄປ (ອພຍ. 10:7).



# ໄພພິບັດທີ 9(ຮຸນແຮງຫລາຍ): ຄວາມມືດ

“ຕໍ່ມາພຣະເຈົ້າຢາເວໄດ້ບອກໂມເຊວ່າ ຈົ່ງຍົກມືຂຶ້ນສູ່ຟ້າສະຫວັນ ແລະ ທົ່ວປະເທດເອຢິບຈະມືດໄປໝົດ.’” (ອພຍ 10:21)



ເທບພຣະເຈົ້າແຫ່ງດວງຕາເວັນ

ອພຍ 10:21-29.

ຊີວິດໃນປະເທດເອຢິບຢຸດນິ້ງເປັນເວລາ 3 ວັນ, (ຍົກເວັ້ນແຕ່ໃນແຄວັນໂກເຊັນ). ພຣະເຈົ້າໄດ້ຊົງປະທານເວລາໃຫ້ທົບທວນ ແຕ່ຟາໂຣຍັງບໍ່ໃຊ້ໂອກາດນັ້ນ.



# ຂໍ້ຄິດເພີ່ມເຕີມ

ພຣະເຈົ້າໄດ້ຜະເຊີນໜ້າກັບເທບພະເຈົ້າຂອງຊາວເອຢິບ
ຊາວເອຢິບມີເທບພະເຈົ້າແຕ່ລະຢ່າງຂອງພວກເຂົາ
ແຕ່ເທບພະເຈົ້າເຫລົ່ານັ້ນກັບບໍ່ສາມາດຊ່ວຍຫຍັງພວກເຂົາໄດ້

ໄພພິບັດເຫລົ່ານັ້ນເພີ່ມທະວີຄວາມຮຸນແຮງຂຶ້ນເລື້ອຍໆທາງດ້ານຜົນກະທົບ, ເຊິ່ງສົ່ງຜົນໃຫ້ເຫັນເຖິງຄວາມໄຮ້ປະໂຫຍດຂອງເທບພະເຈົ້າຂອງພວກເຂົາ. ຟາໂຣມີໃຈແຂງກະດ້າງຫລາຍຂຶ້ນ ທັງໆທີ່ພຣະເຈົ້າໃຫ້ໂອກາດລາວກັບໃຈຫລາຍຄັ້ງແລ້ວ. ຈົນໃນທີ່ສຸດພຣະເຈົ້າຊົງເຮັດໃຫ້ຈິດໃຈລາວແຂງກະດ້າງຕໍ່ໄປ ຍ້ອນຟາໂຣໄດ້ເລືອກທາງນັ້ນແລ້ວ.

## ຂໍ້ຄິດເພີ່ມເຕີມ

ບໍ່ມີພຣະເຈົ້າອື່ນໃດ ທຽບເທົ່າພຣະເຈົ້າຜູ້ຊົງສ້າງໂລກແລະຈັກກະວານ

ການດື້ດຶງໃນການກັບໃຈ ຈະເຮັດໃຫ້ໃຈແຂງກະດ້າງຂຶ້ນກວ່າເກົ່າ, ຈົ່ງຍອມອ່ອນນ້ອມຕໍ່ພຣະເຈົ້າຕອນຍັງມີໂອກາດ

ເລື່ອງລາວນີ້ບໍ່ແມ່ນເປັນພຽງແຕ່ປະຫວັດສາດຂອງຊາວເອຢິບ, ແຕ່ເປັນພາບໃຫ້ພວກເຮົາເຫັນເຖິງສົງຄາມຝ່າຍຈິດວິນຍານ ທີ່ພຣະເຈົ້າຊົງຕໍ່ສູ້ເພື່ອຮຽກເອີ້ນຜູ້ຄົນໃຫ້ຫັນມາຫາພຣະອົງ

ຟາໂຣ ເປັນຕົວຢ່າງໃຫ້ກັບຄົນທີ່ເຫັນຣິດອຳນາດຂອງພຣະເຈົ້າ ແຕ່ບໍ່ຍອມຈຳນົນ

ໂມເຊ ເປັນຕົວຢ່າງຂອງຜູ້ທີ່ເຫັນ, ເຊື່ອ ແລະ ວາງໃຈໃນພຣະເຈົ້າ

**EGW (Patriarchs and Prophets, p. 263)**

“ກ່ອນທີ່ຈະເກີດໄພພິບັດແຕ່ລະຄັ້ງ, ໂມເຊໄດ້ອະທິບາຍລັກສະນະ ແລະ ຜົນກະທົບຂອງ
ໄພພິບັດນັ້ນ, ເພື່ອໃຫ້ກະສັດໄດ້ຮັບຄວາມປອດໄພຖ້າວ່າເລືອກທີ່ຈະຟັງ. ທຸກໆການລົງໂທດ
ແມ່ນຈະເພີ່ມໜັກຂຶ້ນເລື້ອຍໆ, ຈົນໃຈທີ່ເຍີຫຍິ່ງຈະຖ່ອມລົງ, ແລະ ລາວຈະຍອມຮັບວ່າ
ແມ່ນພຣະເຈົ້າຜູ້ຊົງສ້າງຟ້າ ແລະ ສະຫວັນຜູ້ທ່ຽງແທ້. ພຣະເຈົ້າຈະຊົງໃຫ້ໂອກາດຊາວເອຢິບ
ໄດ້ເຫັນວ່າ ສະຕິປັນຍາຂອງເຫລົ່າຜູ້ຍິ່ງໃຫຍ່ໃນໂລກນີ້ ລ້ວນແຕ່ໄຮ້ປະໂຫຍດ, ອຳນາດຂອງ
ເທບພະເຈົ້າຂອງພວກເຂົານັ້ນອ່ອນແອພຽງໃດຖ້າທຽບກັບພຣະເຈົ້າຢາເວ. ພຣະອົງຈະຊົງ
ລົງໂທດຊາວເອຢິບ ເພາະການບູຊາເທບພະເຈົ້າທີ່ບໍ່ມີຊີວິດຂອງພວກເຂົາ. ພຣະອົງຈະເຮັດ
ໃຫ້ພຣະນາມຂອງພຣະອົງນັ້ນຮຸ່ງເຮືອງ, ເພື່ອວ່າຜູ້ຄົນທີ່ໄດ້ຍິນພຣະນາມຂອງພຣະອົງຈະເກງ
ກົວ, ແລະ ເພື່ອປະຊາຊົນຂອງພຣະອົງຈະໄດ້ຫັນຈາກຄວາມບາບ ແລະກັບມາ
ນະມັດສະການພຣະອົງ.”